ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************************

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 22 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 25 MAR 2013

# ຂໍ້ຕົກລົງ

## ວ່າດ້ວຍການໃຊ້ຈ່າຍ

## ເຂົ້າໃນການເຄື່ອນໄຫວກິດຈະກຳ ກິລາ

- ອີງຕາມທິດຊີ້ນຳ ຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 16 ພຶດສະພາ 2012.

- ອີງຕາມຄຳສັ່ງແນະນຳກ່ຽວກັບການປະຢັດ ແລະ ຕ້ານການຟຸມເຟືອຍ ຢູ່ຂະແໜງການ ທຫລ ສະບັບ ເລກທີ 01/ທຫລ ລົງວັນທີ 07 ສິງຫາ 2009.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການພາຍໃນ, ການນຳໃຊ້ງົບປະມານ ແລະ ຂອບເຂດການສ້າງຂະບວນການກິລາຂອງ ທຫລ ເພື່ອເຮັດໃຫ້ການນຳໃຊ້ງົບປະມານ ເຂົ້າໃນການເຄື່ອນໄຫວກິດຈະກຳກິລາໃຫ້ມີຄວາມເປັນເອກະພາບ, ປະຢັດ, ໂປ່ງໃສ ແລະ ສາມາດຄຸ້ມຄອງລາຍຈ່າຍ ຂອງ ທຫລ ເຂົ້າສູ່ລະບຽບ.

ມາດຕາ 2 ການຈັດລະດັບການເຄື່ອນໄຫວກິດຈະກຳກິລາ

ການຈັດລະດັບການເຄື່ອນໄຫວກິດຈະກຳກິລາ ແບ່ງອອກເປັນ 3 ລຳດັບດັ່ງນີ້:

1. ລະດັບທີ I : ການສ້າງຂະບວນການກິລາ ລະຫວ່າງ ທຫລ ກັບພາກສ່ວນພາຍນອກ; ແຂ່ງຂັນກິລາບານເຕະຢູ່ເດີ່ນໃຫຍ່ ແລະ ມີກິລາປະເພດອື່ນ ຫຼື ບໍ່ມີ;
2. ລະດັບທີ II : ການສ້າງຂະບວນການກິລາ ລະຫວ່າງ ກົມ ແລະ ຫຼຸບເທົ່າກົມພາຍໃນ ກັບພາກສ່ວນພາຍນອກ; ແຂ່ງຂັນກິລາບານເຕະຢູ່ເດີ່ນໃຫຍ່ ຫຼື ເດີ່ນນ້ອຍ ແລະ ມີກິລາປະເພດອື່ນ ຫຼື ບໍ່ມີ;
3. ລະດັບທີ III : ການສ້າງຂະບວນການກິລາ ລະຫວ່າງ ກົມ, ຫຼຸບເທົ່າກົມ ຂອງ ທຫລ ດ້ວຍກັນ ແຂ່ງຂັນກິລາບານເຕະຢູ່ເດີ່ນໃຫຍ່ ຫຼື ເດີ່ນນ້ອຍ ແລະ ມີກິລາປະເພດອື່ນ ຫຼື ບໍ່ມີ.

ກໍລະນີທີ່ກົມ ຫຼື ຫຼຸບເທົ່າກົມ ຫາກສ້າງຂະບວນການໃນຂໍ້ 2 ຫຼື ຂໍ້ 3 ແລ້ວ ຈະບໍ່ສາມາດສະເໜີຂໍ້ງົບປະມານເຄື່ອນໄຫວ ກິລາໃນເດືອນນັ້ນອີກ.

ມາດຕາ 3 ການນຳໃຊ້ງົບປະມານເຂົ້າໃນການເຄື່ອນໄຫວກິດຈະກຳແຂ່ງຂັນກິລາ ໃນລະດັບຕ່າງໆ

ການນຳໃຊ້ງົບປະມານເຂົ້າໃນການເຄື່ອນໄຫວກິດຈະກຳແຂ່ງຂັນກິລາ ໃນລະດັບຕ່າງໆ ບົນພື້ນຖານການເຫັນດີ ຂອງຄະນະຫ້ອງການ ທຫລ ດັ່ງນີ້:

1. ລະດັບທີ I ນຳໃຊ້ແຕ່ 4.000.000 ກີບ ( ສີ່ລ້ານກີບ ) ແລະ ນ້ຳດື່ມ 7 ແກັດ;
2. ລະດັບທີ II ນຳໃຊ້ບໍ່ເກີນ 2.500.000 ກີບ ( ສອງລ້ານຫ້າແສນກີບ ) ແລະ ນ້ຳດື່ມ 6 ແກັດ;
3. ລະດັບທີ III ນຳໃຊ້ບໍ່ເກີນ 2.000.000 ກີບ ( ສອງລ້ານກີບ ) ແລະ ນ້ຳດື່ມ 5 ແກັດ.

ມາດຕາ 4 ການນຳໃຊ້ງົບປະມານເຂົ້າໃນການຊຸກຍູ້ສັງຄົມ

ການນຳໃຊ້ງົບປະມານເຂົ້າໃນການຊຸກຍູ້ສັງຄົມ ແມ່ນໃຫ້ເບິ່ງຕາມຄວາມເໝາະສົມ ແລະ ການຊຸກຍູ້ເຄື່ອງຊ່ວຍເຫຼືອອຸປະກອນເຄື່ອງໃຊ້ຕ່າງໆໃຫ້ພາກສ່ວນພາຍນອກ ຕ້ອງຮັບໃຊ້ວຽກງານສ່ວນລວມ ຂອງພາກສ່ວນກ່ຽວຂ້ອງ ແລະ ຕ້ອງເປັນພາກສ່ວນທີ່ ທຫລ ມີການພົວພັນວຽກງານນຳໂດຍກົງ.

ມາດຕາ 5 ຂອບເຂດການສ້າງຂະບວນການກິລາ

ການສ້າງຂະບວນການກິລາ ຕ້ອງປະຕິບັດຕາມຂອບເຂດດັ່ງນີ້:

1. ການແຂ່ງຂັນກິລາ ລະຫວ່າງ ທທລ ກັບພາກສ່ວນພາຍນອກ ສາມາດໃຫ້ຈັດເນື່ອງໃນໂອກາດວັນສຳຄັນຕ່າງໆ ຂອງຊາດ ຫຼື ຕາມພາຍນອກສະເໜີມາ;
2. ການແຂ່ງຂັນກິລາລະຫວ່າງກົມ ແລະ ຫຼຸບເທົ່າກົມພາຍໃນ ທທລ ກັບພາກສ່ວນພາຍນອກ ສາມາດໃຫ້ຈັດ 1 ຄັ້ງຕໍ່ເດືອນຕໍ່ກົມ;
3. ການແຂ່ງຂັນກິລາລະຫວ່າງກົມພາຍໃນ ທທລ ດ້ວຍກັນສາມາດໃຫ້ຈັດ 1 ຄັ້ງຕໍ່ເດືອນຕໍ່ກົມ.

ມາດຕາ 6 ງົບປະມານໃນການສ້າງຂະບວນການໃຫຍ່ ຂອງ ທທລ

ນຳໃຊ້ງົບປະມານໃນການສ້າງຂະບວນການ ໃນວັນສຳຄັນຕ່າງໆຂອງ ທທລ ແມ່ນມອບໃຫ້ຄະນະຮັບຜິດຊອບທີ່ຖືກແຕ່ງຕັ້ງ ຂຶ້ນແຜນລາຍຈ່າຍລະອຽດ ເພື່ອສະເໜີຂໍງົບປະມານ.

ມາດຕາ 7 ການຈັດຕັ້ງປະຕິບັດ

ຫ້ອງການ, ກົມຈັດຕັ້ງ ແລະ ພະນັກງານ, ບັນດາກົມ ແລະ ຫຼຸບເທົ່າກົມພາຍໃນ ທທລ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ

ມາດຕາ 8 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ນ. ພາລີ ພົມມະກອນ